# ເອກະສານຊ້ອນທ້າຍ 10
# ເງື່ອນໄຂການຂົນສົ່ງ

**ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງລາຊະອານາຈັກ  ກຳປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາ ທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອການອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຄົນ ຂ້າມແດນ (ຕໍ່ໄປນີ້ເອີ້ນວ່າ: "ເອກະສານຊ້ອນທ້າຍ");**

ລັດຖະບານແຫ່ງລາຊະອານາຈັກ ກຳປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະ ຊາທິປະ ໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາທາລະນະລັດ ສັງຄົມນິ ຍົມ ຫວຽດນາມ (ຕໍ່ ໄປນີ້ເອີ້ນວ່າ: "ລັດພາຄີ");

ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ລັດ ຖະບານແຫ່ງ ລາຊະອານາຈັກ ໄທ ແລະ ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອ ການອຳນວຍຄວາມ ສະດວກໃນການຂົນສົ່ງສິນຄ້າ ແລະ ຄົນຂ້າມແດນ ຊຶ່ງໄດ້ລົງນາມຄັ້ງທຳອິດໃນວັນທີ 26 ພະຈິກ 1999 ທີ່ ນະຄອນຫຼວງວຽງຈັນ ແລະ ມີການດັດແກ້ເພີ່ມເຕີມໃນວັນທີ 29 ພະຈິກ 2001 ທີ່ ນະ ຄອນຫຼວງຢາງກຸ້ງ, ເຊິ່ງລາຊະ ອານາຈັກ ກຳປູເຈຍ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 29 ພະຈິກ 2001 ທີ່ ນະຄອນຫຼວງຢາງກຸ້ງ, ສາທາລະນະລັດ ປະຊາຊົນ ຈີນ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 03 ພະຈິກ 2002 ທີ່ ພະນົມເປນ ແລະ ສະຫະພາບ ມຽນມາ ໄດ້ ຖືກຮັບເຂົ້າເປັນພາຄີ ໃນວັນທີ 19 ກັນຍາ 2003 ທີ່ ເມືອງຕາລີ ແລະ ໄດ້ມີການດັດແກ້ເພີ່ມເຕີມ ໃນວັນທີ 30 ເມສາ 2004 ທີ່ ພະນົມເປນ (ຕໍ່ໄປນີ້ເອີ້ນວ່າ: "ສັນຍາ");

ອີງຕາມມາດຕາ 03 (ຂ) ແລະ (ບ) ຂອງສັນຍາ ຊຶ່ງມີຜົນຕໍ່ເອກະສານຊ້ອນທ້າຍ ແລະ ອະນຸສັນ ຍາ ຕ້ອງ ກຳນົດລາຍລະອຽດທາງດ້ານເຕັກນິກ ຫຼື ເວລາ ແລະ/ຫຼື ສະຖານທີສະເພາະ ແລະ ໃຫ້ເອກະສານຊ້ອນທ້າຍ ແລະ ອະນຸ ສັນຍາຖືເປັນສ່ວນໜຶ່ງຂອງສັນຍາ ແລະ ມີຜົນບັງຄັບໃຊ້ເທົ່າທຽມກັນ;

ອີງຕາມມາດຕາ 36 ຂອງສັນຍາທີ່ມີການດັດແກ້, ການລົງນາມ ແລະ ການໃຫ້ສັດຕະຍາບັນ ຫຼື ການຮັບຮອງ ແລະ ການມີຜົນບັງຄັບໃຊ້ຂອງສັນຍາ ອາດຈຳແນກອອກຈາກເອກະສານຊ້ອນທ້າຍ ແລະ ອະ ນຸສັນຍາ;

ອີງຕາມກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ 6 ປະເທດ ຄັ້ງທີ 9 ທີ່ມະນີລາ ໃນເດືອນ ມັງກອນ 2000, ກອງປະຊຸມການຂົນສົ່ງພາຍໃຕ້ການຮ່ວມມືໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ ຄັ້ງ 7 ທີ່ ໂຮ ຈິມິນ ໃນເດືອນ ສິງຫາ 2002 ແລະ ກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນ ລຸ່ມແມ່ນ້ຳຂອງ 6 ປະເທດ

ຄັ້ງທີ 11 ທີ່ ພະນົມເປນ ໃນເດືອນ ກັນຍາ 2002 ຊຶ່ງລັດຖະບານຂອງລັດພາຄີ ໄດ້ຕົກລົງເຫັນດີຕໍ່ແຜນງານການສ້າງສັນຍາ ແລະ ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຄັດຕິດສັນຍາສະບັບນີ້ໃຫ້ສໍາເລັດໃນປີ 2005; ແລະ

ອີງຕາມມາດຕາ 24 (ກ) ຂອງສັນຍາສະບັບນີ້ ຊຶ່ງກໍານົດໃຫ້ມີເອກະສານຊ້ອນທ້າຍນີ້ ເພື່ອກໍານົດ ລາຍລະອຽດທາງດ້ານເຕັກນິກ.

**ໄດ້ມີການຕົກລົງ ດັ່ງຕໍ່ໄປນີ້:**

# ພາກທີ I

# ບົດບັນຍັດທົ່ວໄປ

## ມາດຕາ 01: ການອະທິບາຍຄໍາສັບ.

ເພື່ອຈຸດປະສົງຂອງເອກະສານຊ້ອນທ້າຍນີ້, ຄໍາສັບທີ່ຂຶດກ້ອງແມ່ນມີຄວາມໝາຍ ດັ່ງຕໍ່ໄປນີ້:

ກ. ຜູ້ຂົນສົ່ງ ໝາຍເຖິງ: ບຸກຄົນຜູ້ຮັບດໍາເນີນການຂົນສົ່ງສິນຄ້າ ເພື່ອຄ່າຕອບແທນເປັນທາງການຄ້າປົກກະຕິຂອງຕົນ.

ຂ. ຜູ້ຮັບ ໝາຍເຖິງ: ບຸກຄົນຜູ້ທີ່ສິນຄ້າຖືກກໍານົດໃຫ້ສົ່ງໄປເຖິງ.

ຄ. ຜູ້ສົ່ງ ໝາຍເຖິງ: ບຸກຄົນຜູ້ເຮັດສັນຍາກັບຜູ້ຂົນສົ່ງໃນສັນຍາຮັບຂົນສິນຄ້າ ແລະ ສົ່ງມອບໃຫ້ແກ່ຜູ້ຂົນສົ່ງ.

ງ. ໃບສົ່ງສິນຄ້າ ໝາຍເຖິງ: ເອກະສານການຂົນສົ່ງໃຊ້ເພື່ອບັນທຶກສັນຍາຮັບຂົນສິນຄ້າ, ເງື່ອນໄຂຂອງສັນຍາຮັບຂົນສິນຄ້າ, ການຮັບມອບສິນຄ້າໄວ້ເພື່ອຂົນສົ່ງ ແລະ ການສົ່ງມອບສິນຄ້າທີ່ຂົນສົ່ງ.

ຈ. ຄວາມຊັກຊ້າ ໝາຍເຖິງ: ຜູ້ຂົນສົ່ງບໍ່ໄດ້ສົ່ງມອບສິນຄ້າພາຍໃນກໍານົດເວລາທີ່ໄດ້ຕົກລົງໄວ້ ຫຼື ຜູ້ຂົນສົ່ງບໍ່ໄດ້ສົ່ງມອບສິນຄ້າພາຍໃນກໍານົດເວລາປົກກະຕິທີ່ຜູ້ຂົນສົ່ງມີຄວາມພະຍາຍາມໃຊ້  ກໍລະນີນີ້ແມ່ນບໍ່ມີການຕົກລົງກໍານົດເວລາໃນການສົ່ງມອບໄວ້.

ສ. ເຫດສຸດວິໄສ ໝາຍເຖິງ: ກໍລະນີການສູນຫາຍ, ເສຍຫາຍ ຫຼື ສົ່ງມອບຊັກຊ້າທີ່ເກີດຈາກສະຖານະການຊຶ່ງຜູ້ຂົນສົ່ງບໍ່ສາມາດຄາດການ ແລະ ຫຼີກລ້ຽງ ແລະ ບໍ່ສາມາດປ້ອງກັນ ຫຼື ຄວບຄຸມຜົນທີ່ເກີດຂຶ້ນໄດ້.

ຊ. ໃນລະຫວ່າງການຂົນສົ່ງ ໝາຍເຖິງ: ລະຫວ່າງທາງ ເຊັ່ນ: ລະຫວ່າງການຂົນສົ່ງ.

ຍ. ສິດທິໃນການດໍາເນີນການສິນຄ້າ ໝາຍເຖິງ: ອໍານາດໃນການຕັດສິນໃຈກ່ຽວກັບສິນຄ້າທີ່ສົ່ງ.

ດ. ໜ່ວຍສິດທິພິເສດໃນການຖອນເງິນ (Special Drawing Right-SDR) ໝາຍເຖິງ: ໜ່ວຍບັນຊີ ຊຶ່ງກຳນົດໂດຍກອງທຶນການເງິນລະຫວ່າງປະເທດ (IMF) ຊຶ່ງການແລກປ່ຽນເປັນເງິນຕາຕ່າງປະເທດ ຈະຕ້ອງຄິດໄລ່ໂດຍສອດຄ່ອງກັບວິທີການຄິດໄລ່ຄ່າເງິນເຊິ່ງກຳນົດໂດຍກອງທຶນການເງິນລະຫວ່າງປະເທດ.

ຕ. ການໃສ່ເຄື່ອງໝາຍ (Remarks): ໝາຍເຖິງ: ການລະບຸສະພາບສິນຄ້າ ໃນເວລາຮັບມອບສິນ ຄ້າເພື່ອດຳເນີນການຂົນສົ່ງ ຫຼື ໃນເວລາທີ່ມີການສົ່ງມອບສິນຄ້າ.

**ມາດຕາ 02: ຂອບເຂດການນຳໃຊ້.**

ກ. ເອກະສານຊ້ອນທ້າຍນີ້ໃຫ້ນຳໃຊ້ກັບສັນຍາຮັບຂົນສິນຄ້າທາງບົກດ້ວຍພາຫະນະເພື່ອຄ່າຕອບ ແທນ ເມື່ອສະຖານທີ່ທີ່ສົ່ງມອບສິນຄ້າໃຫ້ແກ່ຜູ້ຂົນສົ່ງ ແລະ ສະຖານທີ່ທີ່ສົ່ງມອບໃຫ້ແກ່ຜູ້ຮັບສິນຄ້າຢູ່ໃນດິນແດນຂອງລັດພາຄີຕ່າງປະເທດກັນ.

ຂ. ເອກະສານຊ້ອນທ້າຍນີ້ບໍ່ນຳໃຊ້ກັບການຂົນສົ່ງ ຊຶ່ງດຳເນີນການພາຍໃຕ້ອະນຸສັນຍາວ່າດ້ວຍໄປ ສະນີລະຫວ່າງປະເທດ.

# ພາກທີ II
# ລາຄາ

**ມາດຕາ 03: ລາຄາ.**

ກ. ລາຄາຄ່າຂົນສົ່ງໃຫ້ເປັນໄປຕາມກົນໄກຕະຫຼາດ ແຕ່ຢູ່ພາຍໃຕ້ຂໍ້ກຳນົດເລື່ອງການຜູກຂາດທາງການຄ້າ ເພື່ອຫຼີກລ້ຽງລາຄາທີ່ສູງຫຼາຍ ຫຼື ຕ່ຳຫຼາຍເກີນໄປ.

ຂ. ລັດພາຄີ ແລະ ຜູ້ດຳເນີນການຂົນສົ່ງຈະຕ້ອງຍົກເວັ້ນມາດຕະການ, ສັນຍາ ຫຼື ການປະຕິບັດ ຊຶ່ງເປັນໄປໃນທາງທີ່ຈະເປັນການທຳລາຍການແຂ່ງຂັນໂດຍເສລີ ແລະ ເປັນທຳ ເຊັ່ນ: ການສ້າງກຸ່ມເພື່ອລະງັບການແຂ່ງຂັນທາງການຄ້າ, ການໃຊ້ຄວາມເປັນຜູ້ນຳຕະຫຼາດໃນທາງບໍ່ຖືກຕ້ອງ, ການທຸ່ມຕະຫຼາດ ແລະ ການອຸດໜູນຈາກລັດ, ການກະທຳດັ່ງກ່າວຈະຖືກປະຕິເສດບໍ່ໃຫ້ມີຜົນ, ຕົກເປັນໂມຄະ ແລະ ບໍ່ມີຜົນໃຊ້ບັງຄັບລັດພາຄີ ຈະຕ້ອງແນ່ໃຈວ່າຜູ້ດຳເນີນການທີ່ກ່ຽວຂ້ອງຈະຕ້ອງປະຕິບັດໃຫ້ສອດຄ່ອງກັບຫຼັກການນີ້.

# ພາກທີ III
# ຄວາມຮັບຜິດຊອບຂອງຜູ້ຂົນສົ່ງ

**ມາດຕາ 04: ສັນຍາຮັບຂົນສິນຄ້າ.**

ກ. ໃບສົ່ງສິນຄ້າ.

1. ສັນຍາຮັບຂົນສົ່ງສິນຄ້າຈະຖືກບັນທຶກໂດຍການອອກໃບສົ່ງສິນຄ້າເປັນ 3 ສະບັບ, ລົງລາຍເຊັນຜູ້ສົ່ງ ແລະ ຜູ້ຂົນສົ່ງ. ການລົງລາຍເຊັນດັ່ງກ່າວອາດຈະສ້າງໂດຍການຂຽນ, ພິມ, ເຈາະຮູ ຫຼື ປະທັບກາ, ສ້າງ ສັນຍາລັກ ຫຼື ໂດຍການໃຊ້ເຄື່ອງຈັກອື່ນໆ ຫຼື ລະບົບອີເລັກໂຕນິກ ເທົ່າທີ່ບໍ່ຂັດກັບກົດໝາຍພາຍໃນຂອງປະເທດທີ່ມີການອອກໃບສົ່ງສິນຄ້າ. ໃບສົ່ງສິນຄ້າສະບັບທີ 1 ໃຫ້ມອບແກ່ຜູ້ສົ່ງ, ສະບັບທີ 2 ໃຫ້ຕິດໄປກັບສິນ ຄ້າ ແລະ ສະບັບທີ 3 ໃຫ້ເກັບໄວ້ກັບຜູ້ຂົນສົ່ງ.

2. ຮູບແບບຂອງໃບສົ່ງສິນຄ້າໃຫ້ເປັນໄປຕາມຮູບແບບທີ່ຄັດຕິດທ້າຍເອກະສານຊ້ອນທ້າຍນີ້ ແລະ ໃຫ້ມີລາຍລະອຽດ ດັ່ງຕໍ່ໄປນີ້:

- ວັນ ແລະ ສະຖານທີ່ອອກໃບສົ່ງສິນຄ້າ;
- ຊື່ ແລະ ທີ່ຢູ່ຂອງຜູ້ສົ່ງ;
- ຊື່ ແລະ ທີ່ຢູ່ຂອງຜູ້ຂົນສົ່ງ;
- ສະຖານທີ່ ແລະ ວັນທີຮັບມອບສິນຄ້າໄວ້ ແລະ ສະຖານທີ່ທີ່ກຳນົດໃຫ້ສົ່ງມອບ;
- ຊື່ ແລະ ທີ່ຢູ່ຂອງຜູ້ຮັບ;
- ລາຍລະອຽດທົ່ວໄປກ່ຽວກັບສະພາບສິນຄ້າ ແລະ ວິທີການບັນຈຸຫີບຫໍ່ ແລະ ໃນກໍລະນີທີ່ເປັນວັດຖຸອັນຕະລາຍໃຫ້ມີລາຍລະອຽດຂອງສິນຄ້າສອດຄ່ອງກັບທີ່ກຳນົດໃນເອກະສານຊ້ອນທ້າຍ 01 ຂອງສັນຍາ;
- ຈຳນວນຫີບຫໍ່ ລວມທັງເຄື່ອງໝາຍພິເສດ ແລະ ໝາຍເລກຂອງຫີບຫໍ່;
- ນ້ຳໜັກລວມຂອງສິນຄ້າ ຫຼື ປະລິມານຂອງສິນຄ້າທີ່ລະບຸເປັນຢ່າງອື່ນ;
- ຄ່າທຳນຽມກ່ຽວກັບການຂົນສົ່ງ (ຄ່າທຳນຽມກັບການຂົນສົ່ງ, ຄ່າທຳນຽມເພີ່ມເຕີມ, ຄ່າທຳນຽມອື່ນໆ ຊຶ່ງເກີດຂຶ້ນນັບແຕ່ເວລາທີ່ມີການເຮັດສັນຍາຮັບຂົນສົ່ງສິນຄ້າຈົນເຖິງເວລາທີ່ມີການສົ່ງມອບສິນຄ້າ);
- ມູນຄ່າສິນຄ້າເພື່ອປະໂຫຍດໃນວິທີການແຈ້ງພາສີ;
- ຄຳສັ່ງທີ່ຈຳເປັນສຳລັບວິທີການແຈ້ງພາສີ ແລະ ວິທີການອື່ນໆ; ແລະ
- ຂໍ້ຄວາມທີ່ລະບຸໃນການຂົນສົ່ງຢູ່ພາຍໃຕ້ຂໍ້ກຳນົດແຫ່ງເອກະສານຊ້ອນທ້າຍນີ້. ເຖິງຢ່າງໃດກໍ່ຕາມ, ຈະບໍ່ມີຜົນກະທົບຕໍ່ຂໍ້ກຳນົດໃນສັນຍາທີ່ລະບຸໄວເປັນຢ່າງອື່ນ.

3. ໃນກໍລະນີທີ່ຈຳເປັນ ໃບສົ່ງສິນຄ້າຈະຕ້ອງມີລາຍລະອຽດດັ່ງຕໍ່ໄປນີ້:

- ຂໍ້ຄວາມທີ່ບໍ່ອະນຸຍາດໃຫ້ມີການປ່ຽນຖ່າຍຍານພາຫະນະ;
- ຄ່າທຳນຽມທີ່ຜູ້ສົ່ງຕົກລົງຈະຊຳລະສະສາງ;
- ຈຳນວນເງິນທີ່ຈະຊຳລະສະສາງເມື່ອມີການສົ່ງມອບສິນຄ້າ;
- ການແຈ້ງລາຄາສິນຄ້າ ແລະ ການແຈ້ງຈຳນວນເງິນທີ່ສະແດງເຖິງສ່ວນໄດ້ເສຍພິເສດໃນ

ການສົ່ງມອບ;

- ການລະບຸເຄື່ອງຜູ້ຂົນສົ່ງ ແລະ ຜູ້ຮັບສິນຄ້າ;
- ຄຳສັ່ງທີ່ຜູ້ສົ່ງໄດ້ໃຫ້ໄວ້ແກ່ຜູ້ຂົນສົ່ງກ່ຽວກັບການປະກັນໄພສິນຄ້າທີ່ສົ່ງ;
- ກຳນົດເວລາທີ່ຕົກລົງໄວ້ເພື່ອດຳເນີນການຂົນສົ່ງໃຫ້ສຳເລັດ; ແລະ
- ເອກະສານລາຍການສິນຄ້າທີ່ໄດ້ມອບໃຫ້ຜູ້ຂົນສົ່ງ.

4. ລັດພາຄີ ອາດໃສ່ລາຍການອື່ນໆທີ່ເຫັນວ່າເປັນປະໂຫຍດໄວ້ໃນໃບສົ່ງສິນຄ້າກໍ່ໄດ້.

5. ການບໍ່ອອກໃບສົ່ງສິນຄ້າ, ໃບສົ່ງສິນຄ້າມີຄວາມຜິດປົກກະຕິ ຫຼື ສູນຫາຍ ຈະບໍ່ມີຜົນຕໍ່ການມີຢູ່ ຫຼື ຄວາມສົມບູນຂອງສັນຍາຮັບຂົນ ໂດຍສັນຍາຮັບຂົນດັ່ງກ່າວຍັງຄົງຕົກຢູ່ໃຕ້ບັງຄັບຂອງຂໍ້ກຳນົດຂອງເອກະ ສານຊ້າຍທ້າຍນີ້.

ຂ. ການໃສ່ເຄື່ອງໝາຍໃນເວລາທີ່ຮັບມອບສິນຄ້າ.

1. ໃນເວລາທີ່ໄດ້ຮັບມອບສິນຄ້າ, ຜູ້ຂົນສົ່ງຈະຕ້ອງກວດກາປະລິມານ (ຈຳນວນ ແລະ ນໍ້າໜັກ), ສະພາບຂອງສິນຄ້າ ແລະ ຫີບຫໍ່ທີ່ບັນຈຸສິນຄ້ານັ້ນເທົ່າທີ່ເຫັນໄດ້ຈາກພາຍນອກ ແລະ ໃສ່ເຄື່ອງໝາຍໃນທີ່ ເໝາະສົມລົງໃນໃບສົ່ງສິນຄ້າ. ໃນກໍລະນີທີ່ບໍ່ມີການໃສ່ເຄື່ອງໝາຍຈາກຜູ້ຂົນສົ່ງໃຫ້ສັນນິຖານວ່າສິນຄ້ານັ້ນ ສົມບູນ ແລະ ຢູ່ໃນສະພາບດີ.

2. ໃນກໍລະນີທີ່ຜູ້ຂົນສົ່ງບໍ່ສາມາດກວດກາຄວາມຖືກຕ້ອງຕາມຂໍ້ຄວາມທີ່ໄດ້ໃສ່ເຄື່ອງໝາຍໃບສົ່ງ ສິນຄ້າກ່ຽວກັບປະລິມານ, ຄຸນນະພາບ ແລະ ຫີບຫໍ່ສິນຄ້າ. ຜູ້ຂົນສົ່ງຈະຕ້ອງໃສ່ເຄື່ອງໝາຍໄວ້ໃນໃບສົ່ງສິນ ຄ້າ ແລະ ລະບຸເຖິງເຫດຜົນທີ່ບໍ່ສາມາດກວດກາຄວາມຖືກຕ້ອງດັ່ງກ່າວໄດ້. ຜູ້ຂົນສົ່ງຈະຕ້ອງປະຕິບັດເຊັ່ນ ດຽວກັນກັບເນື້ອໃນທີ່ຖືກລະບຸທີ່ຜູ້ຂົນສົ່ງໄດ້ລະບຸກ່ຽວກັບສະພາບຂອງສິນຄ້າ ແລະ ຫີບຫໍ່ທີ່ເຫັນໄດ້ຈາກພາຍ ນອກ ແຕ່ການໃສ່ເຄື່ອງໝາຍດັ່ງກ່າວຈະບໍ່ຜູກມັດຜູ້ສົ່ງສິນຄ້າ ເວັ້ນແຕ່ຜູ້ສົ່ງຈະໄດ້ຕົກລົງໂດຍຊັດເຈນທີ່ຈະ ຍອມຮັບການໃສ່ເຄື່ອງໝາຍນັ້ນໃນໃບສົ່ງສິນຄ້າ.

ຄ. ສິດໃນການດຳເນີນການ.

ເວັ້ນແຕ່ຈະມີການຕົກລົງເປັນຢ່າງອື່ນໃນໃບສົ່ງສິນຄ້າ:

1. ຜູ້ສົ່ງສິນຄ້າມີສິດໃນການດຳເນີນການຕໍ່ກັບສິນຄ້າກ່າວ ໂດຍສະເພາະການຢຸດການຂົນສົ່ງສິນ ຄ້າໃນລະຫວ່າງການຂົນສົ່ງ, ສັ່ງໃຫ້ສິນຄ້າກັບມາທີ່ສະຖານທີ່ຕົ້ນທາງ ຫຼື ປ່ຽນແປງສະຖານທີ່ສົ່ງມອບ ຫຼື ຜູ້ ຮັບສິນຄ້າ.

2. ສິດທິໃນການດຳເນີນການຕໍ່ກັບສິນຄ້າຂອງຜູ້ສົ່ງຈະສິ້ນສຸດລົງ ແລະ ໂອນໄປຍັງຜູ້ຮັບສິນຄ້າຄື:

- ເມື່ອມີການສົ່ງມອບສິນຄ້າທີ່ສົ່ງ; ຫຼື
- ເມື່ອສິນຄ້າມາເຖິງສະຖານທີ່ທີ່ລະບຸໃຫ້ສົ່ງມອບ ແລະ ຜູ້ຮັບຮຽກໃຫ້ສົ່ງມອບສິນຄ້າ; ຫຼື
- ເມື່ອຜູ້ຮັບສິນຄ້າໄດ້ຮັບໃບສົ່ງສິນຄ້າສະບັບທີ 2 ໂດຍການຮຽກຮ້ອງຂອງຜູ້ຮັບສິນຄ້າເອງ.

ຜູ້ຂົນສົ່ງມີສິດໄດ້ຮັບຄືນຄ່າໃຊ້ຈ່າຍເພີ່ມເຕີມອື່ນໆທີ່ເກີດຈາກການໃຊ້ສິດໃນການດໍາເນີນການຕໍ່ສິນ ຄ້າໃນລະຫວ່າງການຂົນສົ່ງ.

ງ. ສິດໃນການດໍາເນີນຄະດີ.

ຜູ້ສົ່ງສິນຄ້າ ແລະ ຜູ້ຮັບສິນຄ້າຕ່າງມີສິດໃນການຟ້ອງຮ້ອງຜູ້ຂົນສົ່ງ ເພື່ອຄ່າທົດແທນໃນການສູນ ຫາຍ, ເສຍຫາຍ ຫຼື ສົ່ງມອບຊັກຊ້າ, ແຍກຈາກກັນ ແຕ່ຜູ້ຂົນສົ່ງມີໜ້າທີ່ຈ່າຍຄ່າທົດແທນພຽງຄັ້ງດຽວ.

## ມາດຕາ 05: ຫຼັກການຄວາມຮັບຜິດຊອບຂອງຜູ້ຂົນສົ່ງ.

ກ. ຂໍ້ບັງຄັບດ້ານກົດໝາຍ.

ຂໍ້ກໍານົດອື່ນໆໃນສັນຍາຮັບຂົນ ຊຶ່ງມີຜົນບໍ່ວ່າໂດຍທາງກົງ ຫຼື ທາງອ້ອມໃນການຫຼີກລ້ຽງຂໍ້ກໍານົດ ຂອງເອກະສານຊ້ອນທ້າຍນີ້ຕົກເປັນໂມຄະ. ແຕ່ຄວາມເປັນໂມຄະທີ່ວ່ານັ້ນບໍ່ກະທົບເຖິງຄວາມສົມບູນຂອງ ຂໍ້ກໍານົດອື່ນໆໃນສັນຍາຮັບຂົນ.

ຂ. ການສັນຍາ ແລະ ການລະເມີດ.

ລະບົບຄວາມຮັບຜິດຊອບນີ້ໃຊ້ບັງຄັບກັບການອ້າງສິດອື່ນໆ ອັນມີພື້ນຖານເກີດຈາກການປະຕິບັດຕາມສັນຍາຮັບຂົນສົ່ງພາຍໃຕ້ເອກະສານຊ້ອນທ້າຍນີ້, ບໍ່ວ່າສິດຮຽກຮ້ອງດັ່ງກ່າວຢູ່ໃນສັນຍາ ຫຼື ນອກເໜືອ ສັນຍາ.

ຄ. ຄວາມຮັບຜິດຊອບຕໍ່ການກະທໍາຂອງລູກຈ້າງ, ຕົວແທນ ແລະ ຜູ້ຂົນສົ່ງຕໍ່.

ຜູ້ຂົນສົ່ງຈະຕ້ອງຮັບຜິດຊອບຕໍ່ການທໍາ ແລະ/ຫຼື ການລະເວັ້ນຂອງລູກຈ້າງ, ຕົວແທນ ແລະ ຜູ້ຮັບຂົນ ສົ່ງຕໍ່ທີ່ຜູ້ຂົນສົ່ງໄດ້ໃຊ້ໃຫ້ດໍາເນີນວຽກງານຂອງຕົນ. ລູກຈ້າງ, ຕົວແທນ ແລະ ຜູ້ຮັບຂົນສົ່ງຕໍ່ດັ່ງກ່າວມີສິດອ້າງ ຂໍ້ຕໍ່ສູ້ຢ່າງດຽວກັນກັບຂໍ້ຕໍ່ສູ້ຂອງຜູ້ຂົນສົ່ງຕາມທີ່ລະບຸໄວ້ໃນເອກະສານຊ້ອນທ້າຍນີ້.

## ມາດຕາ 06: ຄວາມຮັບຜິດຊອບຂອງຜູ້ຂົນສົ່ງ.

ກ. ຫຼັກການທົ່ວໄປ.

ຜູ້ຂົນສົ່ງຈະຕ້ອງຮັບຜິດຊອບໃນການສູນຫາຍທັງໝົດ ຫຼື ບາງສ່ວນ ແລະ ການເສຍຫາຍຂອງສິນ ຄ້າ ລວມທັງການສົ່ງມອບຊັກຊ້າ ຊຶ່ງເກີດຂຶ້ນລະຫວ່າງເວລາທີ່ຜູ້ຂົນສົ່ງໄດ້ຮັບມອບສິນຄ້າໄວ້ ແລະ ເວລາທີ່ ໄດ້ສົ່ງມອບ.

ຂ. ຂໍ້ສັນນິຖານການສູນຫາຍ.

1. ຖ້າບໍ່ໄດ້ມີການສົ່ງມອບສິນຄ້າພາຍໃນ 30 ວັນນັບແຕ່ວັນໝົດກາານົດເວລາສົ່ງມອບ ຫຼື ບໍ່ໄດ້ມີ ການສົ່ງມອບສິນຄ້າພາຍໃນ 60 ວັນນັບແຕ່ເວລາທີ່ຜູ້ຂົນສົ່ງໄດ້ຮັບມອບສິນຄ້ານັ້ນ, ໃນກໍລະນີທີ່ບໍ່ໄດ້ມີການ ຕົກລົງເລື່ອງກໍານົດເວລາສົ່ງມອບໃຫ້ຖືວ່າສິນຄ້ານັ້ນສູນຫາຍ ແລະ ຜູ້ສົ່ງ/ຜູ້ຮັບສິນຄ້າມີສິດຮຽນຮ້ອງຄ່າທົດ ແທນສໍາລັບການສູນຫາຍ.

2. ໃນກໍລະນີທີ່ໄດ້ສິນຄ້າກັບຄືນມາ ແມ່ນໃຫ້ຜູ້ຂົນສົ່ງແຈ້ງຕໍ່ຜູ້ສົ່ງ/ຜູ້ຮັບສິນຄ້າທັນທີ, ຜູ້ສົ່ງ/ຜູ້ຮັບສິນ ຄ້າມີສິດຮຽກຮ້ອງໃຫ້ຜູ້ຂົນສົ່ງສົ່ງມອບສິນຄ້າໃຫ້ແກ່ຕົນໂດຍຄືນຄ່າທົດແທນທີ່ໄດ້ຮັບມາແລ້ວ. ທັງນີ້ບໍ່ເປັນ ການຕັດສິດຮຽກຮ້ອງຄ່າທົດແທນເພື່ອການສູນຫາຍບາງສ່ວນ, ການເສຍຫາຍ ຫຼື ການສົ່ງມອບຊັກຊ້າ.

3. ໃນກໍລະນີທີ່ຜູ້ສົ່ງ/ຜູ້ຮັບສິນຄ້າບໍ່ໄດ້ຮຽກຮ້ອງໃຫ້ສົ່ງມອບສິນຄ້າທີ່ໄດ້ກັບຄືນມາພາຍໃນ 30 ວັນ ນັບຈາກວັນທີທີ່ຜູ້ສົ່ງ/ຜູ້ຮັບສິນຄ້າໄດ້ຮັບການແຈ້ງຂົນສົ່ງ. ຜູ້ຂົນສົ່ງມີສິດດໍາເນີນການຕໍ່ກັບສິນຄ້ານັ້ນໄດ້ຕາມ ທີ່ເຫັນສົມຄວນພາຍໃຕ້ກົດໝາຍທີ່ບັງຄັບໃຊ້ໃນສະຖານທີ່ທີ່ສິນຄ້ານັ້ນຢູ່.

## ມາດຕາ 07: ການຄິດໄລ່ຄ່າເສຍຫາຍ ແລະ ການກໍານົດຄວາມຮັບຜິດຊອບ.

ກ. ການສູນຫາຍ ແລະ ເສຍຫາຍ.

1. ການຄິດໄລ່ຄ່າທົດແທນໃນກໍລະນີສິນຄ້າສູນຫາຍທັງໝົດ ຫຼື ບາງສ່ວນ ຫຼື ສິນຄ້າເສຍຫາຍໃຫ້ ຄິດໄລ່ໂດຍອີງຕາມລາຄາຕະຫຼາດຊື້ຂາຍລ່ວງໜ້າ ຫຼື ລາຄາຕະຫຼາດປະຈຸບັນ ຫຼື ລາຄາປົກກະຕິຂອງສິນຄ້າ ຂອງໃນເວລາ ແລະ ສະຖານທີ່ທີ່ຜູ້ຂົນສົ່ງໄດ້ຮັບມອບສິນຄ້າໄວ້.

2. ຜູ້ຂົນສົ່ງຈະຕ້ອງຮັບຜິດຊອບໃນຄ່າທົດແທນບໍ່ເກີນ 8.33 ໜ່ວຍສິທິພິເສດໃນການຖອນເງິນຕໍ່ກິ ໂລກຼາມຂອງນໍ້າໜັກລວມຂອງສິນຄ້າທີ່ບໍ່ໄດ້ມີການສົ່ງມອບ ຫຼື ນໍ້າໜັກລວມຂອງສິນຄ້າທີ່ເສຍຫາຍ.

3. ນອກຈາກນີ້, ຜູ້ຂົນສົ່ງຈະຕ້ອງຄືນເງິນຄ່າທໍານຽມໃນການຂົນສົ່ງ, ຄ້າພາສີ, ອາກອນ ແລະ ຄ່າທໍາ ນຽມອື່ນທີ່ກ່ຽວຂ້ອງກັບການຂົນສົ່ງເຕັມຈໍານວນໃນກໍລະນີທີ່ສິນຄ້າສູນຫາຍທັງໝົດ ແລະ ຕາມສ່ວນໃນກໍ ລະນີທີ່ສິນຄ້າສູນຫາຍບາງສ່ວນ.

4. ຜູ້ຂົນສົ່ງບໍ່ຕ້ອງຮັບຜິດຕໍ່ການເສຍຫາຍອື່ນໆ.

ຂ. ການສົ່ງມອບຊັກຊ້າ.

ຈໍານວນຄ່າທົດແທນທີ່ຜູ້ຂົນສົ່ງຈະຕ້ອງຮັບຜິດຊອບໃນການເສຍຫາຍເກີດຈາກການສົ່ງມອບຊັກຊ້າ ນອກເໜືອຈາກການເສຍຫາຍທາງກາຍຍະພາບຊຶ່ງມີຜົນຕໍ່ມູນຄ່າສິນຄ້າ ຈະຖືກກໍານົດບໍ່ເກີນລາຄາຄ່າຂົນ ສົ່ງ.

ຄ. ການແຈ້ງມູນຄ່າສິນຄ້າ ແລະ/ຫຼື ການແຈ້ງສ່ວນໄດ້ເສຍພິເສດໃນການສົ່ງມອບ.

ຄ່າທົດແທນທີ່ຜູ້ຂົນສົ່ງຕ້ອງຮັບຜິດຊອບຕາມທີ່ກຳນົດໃນວັກກ່ອນໜ້ານີ້ ອາດສູງຂຶ້ນຈາກການທີ່ຜູ້ ສົ່ງລະບຸລາຍການໄວ້ໃນໃບສົ່ງສິນຄ້າກ່ອນການຂົນສົ່ງ ພ້ອມທັງຊຳລະສະສາງຄ່າທຳນຽມເພີ່ມເຕີມແກ່ຜູ້ຂົນ ສົ່ງ ດັ່ງນີ້:

1. ການແຈ້ງມູນຄ່າສິນຄ້າ.

- ໃນກໍລະນີການກຳນົດຄວາມຮັບຜິດຊອບຕາມມາດຕາ 07 (ກ) (2) ຈະຖືກທົດແທນດ້ວຍຈຳນວນ ມູນຄ່າສິນຄ້າ; ແລະ/ຫຼື.

2. ການແຈ້ງສ່ວນໄດ້ເສຍພິເສດໃນການສົ່ງມອບ.

- ໃນກໍລະນີທີ່ຜູ້ຂົນສົ່ງຈະຕ້ອງຮັບຜິດຊອບໃນຄ່າທົດແທນຕໍ່ຄວາມເສຍຫາຍເພີ່ມເຕີມ ຊຶ່ງເປັນອິດ ສະລະຈາກຄ່າທົດແທນຕາມທີ່ລະບຸໃນມາດຕາ 07 (ກ) ແລະ (ຂ).

## ມາດຕາ 08: ການຫຼຸດພົ້ນຈາກຄວາມຮັບຜິດຊອບຂອງຜູ້ຂົນສົ່ງ.

ກ. ຜູ້ຂົນສົ່ງຈະຫຼຸດພົ້ນຈາກຄວາມຮັບຜິດຊອບ ຫາກຜູ້ຂົນສົ່ງສາມາດພິສູດໄດ້ວ່າການສູນຫາຍ, ເສຍຫາຍ ຫຼື ສົ່ງມອບຊັກຊ້າເກີດຈາກ:

1. ເຫດສຸດວິໄສ;
2. ສະພາບຜິດປົກກະຕິຂອງສິນຄ້ານັ້ນເອງ;
3. ການກະທຳໂດຍບໍ່ຊອບທຳ ຫຼື ຄວາມປະມາດຂອງຜູ້ສົ່ງ/ຜູ້ຮັບສິນຄ້າ; ຫຼື
4. ຄຳສັ່ງຂອງຜູ້ໃຊ້ສິດຮຽກຮ້ອງທີ່ໄດ້ກຳນົດໃຫ້ ທີ່ບໍ່ແມ່ນໃນກໍລະນີທີ່ເປັນຜົນຂອງການກະທຳໂດຍບໍ່ຊອບທຳ ຫຼື ຄວາມປະມານຂອງຜູ້ຂົນສົ່ງ.

ຂ. ຜູ້ຂົນສົ່ງຈະບໍ່ຫຼຸດພົ້ນຈາກຄວາມຮັບຜິດຊອບໂດຍອາໄສສະພາບບົດພ່ອງຂອງລົດທີ່ໃຊ້ໃນການ ຂົນສົ່ງ.

ຄ. ເວັ້ນແຕ່ຜູ້ສົ່ງ/ຜູ້ຮັບສິນຄ້າຈະສາມາດພິສູດຫຼັກຖານເປັນຢ່າງອື່ນ, ຜູ້ຂົນສົ່ງຈະຫຼຸດພົ້ນຈາກຄວາມຮັບຜິດຊອບຖ້າຜູ້ຂົນສົ່ງພິສູດໄດ້ວ່າການສູນຫາຍ, ເສຍຫາຍ ຫຼື ການສົ່ງມອບຊັກຊ້າໜ້າຈະເກີດຂຶ້ນຈາກ ພຶດຕິກຳໃດພຶດຕິກຳໜຶ່ງ ດັ່ງຕໍ່ໄປນີ້:

1. ການໃຊ້ພາຫະນະທີ່ບໍ່ມີການປົກຄຸມ ໂດຍມີການຕົກລົງກັນໄວ້ແລ້ວຢ່າງຈະແຈ້ງ ແລະ ໄດ້ ລະບຸໄວ້ໃນໃບສົ່ງສິນຄ້າ ເວັ້ນແຕ່ຈະແຈ້ງວ່າສິນຄ້ານັ້ນໄດ້ຫາຍໄປຢ່າງຜິດປົກກະຕິ ຫຼື ມີ ຫີບຫໍ່ສູນຫາຍໄປ;
2. ການບໍ່ໄດ້ບັນຈຸຫີບຫໍ່ ຫຼື ສະພາບຫີບຫໍ່ບົກພ່ອງ, ກໍລະນີທີ່ສິນຄ້ານັ້ນຈະເສື່ອມສະພາບ ຫຼື ເສຍຫາຍໄດ້ຖ້າບໍ່ໄດ້ບັນຈຸຫີບຫໍ່ ຫຼື ຫີບຫໍ່ຢ່າງບໍ່ເໝາະສົມ;

3. ການຍົກຂົນ, ການບັນທຸກ, ການຈັດລຽງ ຫຼື ການຂົນຖ່າຍສິນຄ້າ ຊຶ່ງໄດ້ດຳເນີນການ ໂດຍ ຜູ້ສົ່ງ, ຜູ້ຮັບສິນຄ້າ ຫຼື ບຸກຄົນຜູ້ດຳເນີນການໃນນາມຂອງຜູ້ສົ່ງ ຫຼື ຜູ້ຮັບສິນຄ້າ;

4. ສະພາບຕາມທຳມະຊາດຂອງສິນຄ້າບາງຊະນິດ ຊຶ່ງງ່າຍຕໍ່ການສູນຫາຍທັງໝົດ ຫຼື ບາງ ສ່ວນ ຫຼື ຕໍ່ການເສຍຫາຍ ໂດຍສະເພາະຈາກການແຕກຫັກ, ເປັນຂີ້ໝ້ຽງ, ເນົ່າເປື່ອຍ, ຮົ່ວ, ເສື່ອມສະພາບຕາມທຳມະຊາດ ຫຼື ຈາກການກະທຳຂອງແມງໄມ້ ຫຼື ສັດອື່ນໆ. ເຖິງຢ່າງໃດ ກໍ່ຕາມ, ຖ້າການຂົນສົ່ງນັ້ນກະທຳໂດຍໃຊ້ພາຫະນະທີ່ມີອຸປະກອນພິເສດ ເພື່ອປ້ອງກັນສິນ ຄ້າທີ່ສົ່ງຈາກຜົນຂອງຄວາມຮ້ອນ, ຄວາມເຢັນ, ການປ່ຽນແປງຂອງອຸນນະພູມ ຫຼື ຄວາມ ຊຸ່ມຂອງອາກາດ, ຜູ້ຂົນສົ່ງຈະຕ້ອງພິສູດວ່າຕົນໄດ້ດຳເນີນການຕາມຂັ້ນຕອນທຸກປະການ ຕາມໜ້າທີ່ອັນຕ້ອງກະທຳໃນພຶດຕິກຳເຊັ່ນນັ້ນກ່ຽວກັບການເລືອກ, ການບຳລຸງຮັກສາ ແລະ ການໃຊ້ອຸປະກອນ ລວມໄປເຖິງການປະຕິບັດຕາມຄຳສັ່ງພິເສດອື່ນໆທີ່ຕົນໄດ້ຮັບມາ;

5. ການສ້າງເຄື່ອງໝາຍ ຫຼື ໝາຍເລກເທິງຫີບຫໍ່ບໍ່ຊັດເຈນ ຫຼື ບໍ່ພຽງພໍ;

6. ການຮັບຂົນສັດ ໂດຍຜູ້ຂົນສົ່ງຕ້ອງພິສູດວ່າຕົນໄດ້ດຳເນີນການຕາມຂັ້ນຕອນທຸກປະການ ຊຶ່ງຕາມປົກກະຕິເປັນໜ້າທີ່ທີ່ຕົນຕ້ອງກະທຳໃນພຶດຕິກຳນັ້ນ ແລະ ໄດ້ປະຕິຕາມຄຳສັ່ງພິ ເສດອື່ນໆທີ່ຕົນໄດ້ຮັບມາ.

ມາດຕາ 09: ການຍົກເວັ້ນການຫຼຸດພົ້ນຄວາມຮັບຜິດຊອບ ແລະ ຂອບເຂດຄວາມຮັບ ຜິດຂອງຜູ້ຂົນສົ່ງ.

ຜູ້ຂົນສົ່ງບໍ່ມີສິດຖືເອົາປະໂຫຍດຈາກມາດຕາວ່າດ້ວຍການຫຼຸດພົ້ນຄວາມຮັບຜິດຊອບ ຫຼື ຂອບເຂດຄວາມຮັບຜິດຊອບ ໃນກໍລະນີທີ່ການສູນຫາຍ, ເສຍຫາຍ ຫຼື ສົ່ງມອບຊັກຊ້າ, ເກີດຈາກການກະທຳໂດຍຕັ້ງ ໃຈ ຫຼື ປະມາດຢ່າງຮ້າຍແຮງຂອງຜູ້ຂົນສົ່ງ, ລູກຈ້າງ, ຕົວແທນ ຫຼື ຜູ້ຮັບຂົນສົ່ງຕໍ່ຂອງຜູ້ຂົນສົ່ງ.

## ມາດຕາ 10: ການຮຽກຮ້ອງ ແລະ ການດຳເນີນຄະດີ.

ກ. ການໃສ່ເຄື່ອງໝາຍໃນເວລາສົ່ງມອບ.

1. ເມື່ອຜູ້ຂົນສົ່ງມອບສິນຄ້າໃຫ້ແກ້ຜູ້ຮັບສິນຄ້າ, ຜູ້ຮັບສິນຄ້າຕ້ອງກວດກາປະລິມານສິນຄ້າ (ຈຳ ນວນ ແລະ ນ້ຳໜັກ) ແລະ ຄຸນນະພາບ (ສະພາບ) ສິນຄ້າ ແລະ ຫີບຫໍ່ສິນຄ້ານັ້ນເທົ່າທີ່ເຫັນໄດ້ຈາກພາຍ ນອກ ໂດຍໃນກໍລະນີທີ່ພົບວ່າສິນຄ້າສູນຫາຍ ຫຼື ເສຍຫາຍ ຜູ້ຮັບສິນຄ້າຕ້ອງໃສ່ເຄື່ອງໝາຍ/ລະບຸເນື້ອໃນເປັນລາຍລັກອັກສອນໄປຍັງຜູ້ຂົນສົ່ງທັນທີ.

2. ໃນກໍລະນີເປັນການສູນຫາຍ ຫຼື ເສຍຫາຍທີ່ບໍ່ເຫັນຢ່າງຈະແຈ້ງ, ໃນໄລຍະເວລາໃນການໃສ່ເຄື່ອງ ໝາຍ ລະບຸເນື້ອໃນໃຫ້ຂະຫຍາຍເປັນພາຍໃນ 7 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບມອບສິນຄ້າ.

3. ໃນກໍລະນີທີ່ບໍ່ມີການໃສ່ເຄື່ອງໝາຍ/ລະບຸເນື້ອໃນຈາກຜູ້ຮັບສິນຄ້າ ໃຫ້ສັນນິຖານວ່າປະລິມານ ແລະ ສະພາບສິນຄ້ານັ້ນເປັນໄປຕາມທີ່ໄດ້ລະບຸໄວ້.

ຂ. ອາຍຸຄວາມ.

ການຮຽກຮ້ອງເພື່ອຄ່າທົດແທນທີ່ເກີດຈາກຜູ້ຂົນສົ່ງສໍາລັບການສູນຫາຍ, ເສຍຫາຍ ຫຼື ສົ່ງມອບຊັກ ຊ້າສິນຄ້າ ອາດຈະໝົດອາຍຸການ ເວັ້ນແຕ່ຈະໄດ້ມີການຟ້ອງຄະດີຕໍ່ສານ ຫຼື ສະເໜີຂໍ້ຂັດແຍ່ງໃຫ້ອະນຸຕຸລາ ການຊີ້ຂາດພາຍໃນໜຶ່ງ ປີ ຄື:

1. ໃນກໍລະນີສູນຫາຍບາງສ່ວນ, ເສຍຫາຍ ຫຼື ສົ່ງມອບຊັກຊ້າ:

- ນັບຕັ້ງແຕ່ມີການສົ່ງມອບສິນຄ້າ; ແລະ

2. ໃນກໍລະນີສູນຫາຍທັງໝົດ.

- ນັບຕັ້ງແຕ່ 30 ວັນຫຼັງຈາກຄົບກາໜົດເວລາສົ່ງມອບ ຫຼື ນັບຕັ້ງແຕ່ 60 ວັນຫຼັງຈາກທີ່ຜູ້ຂົນສົ່ງໄດ້ຮັບມອບສິນຄ້າ ໂດຍໃນກໍລະນີທີ່ບໍ່ມີການຕົກລົງເວລາສົ່ງມອບ. ຢ່າງໃດກໍ່ຕາມ, ໃນກໍລະນີທີ່ເປັນການກະທາໂດຍເຈດຈະນາຂອງຜູ້ຂົນສົ່ງ, ລູກຈ້າງ, ຕົວແທນ ຫຼື ຜູ້ຮັບຂົນສົ່ງຕໍ່ຂອງຜູ້ຂົນສົ່ງ. ອາຍຸຄວາມໃນການຮ້ອງຟ້ອງ ຫຼື ສະເໜີຂໍ້ຂັດແຍ່ງຕໍ່ອະນຸຕຸລາການ ຈະເປັນ 03 ປີ.

ຄ. ຂອບເຂດອໍານາດສານ.

1. ການຮ້ອງຟ້ອງດໍາເນີນຄະດີເພື່ອຮຽກຮ້ອງຄ່າທົດແທນໃນເອກະສານຊ້ອນທ້າຍນີ້ ອາດຍື່ນຟ້ອງຕໍ່ ສານຂອງ ລັດພາຄີ ຄື:

- ເປັນສະຖານທີ່ທີ່ເປັນຈຸດເລີ່ມຕົ້ນ ຫຼື ເປັນຈຸດປາຍທາງຂອງການຂົນສົ່ງ;
- ເປັນສະຖານທີ່ທີ່ເກີດຄວາມສູນຫາຍ ຫຼື ເສຍຫາຍຂຶ້ນ (ຖ້າສາມາດລະບຸໄດ້);
- ເປັນສະຖານທີ່ທີ່ຜູ້ຂົນສົ່ງມີສໍານັກງານໃຫຍ່ຕັ້ງຢູ່; ຫຼື
- ເປ◌ັນສະຖານທີ່ທີ່ຜູ້ໃຊ້ສິດຮ້ອງຟ້ອງມີພູມລໍາເນົາຢູ່.

2. ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບຄ່າທົດແທນອາດເຮັດໂດຍອະນຸຕຸລາການ ພາຍໃຕ້ຂໍ້ຕົກລົງລະ ຫວ່າງຄູ່ ສັນຍາທີ່ກ່ຽວຂ້ອງ ຊຶ່ງເຮັດຂຶ້ນພາຍຫຼັງຂໍ້ຂັດແຍ່ງເກີດຂຶ້ນແລ້ວ.

## ພາກທີ VI

# ບົດບັນຍັດສຸດທ້າຍ

## ມາດຕາ 11: ການດັດແກ້.

ລັດພາຄີໃດໜຶ່ງ ສາມາດສະເໜີໃຫ້ມີການດັດແກ້ເອກະສານຊ້ອນທ້າຍໄດ້ ໂດຍຜ່ານຄະນະກຳມະ ການຮ່ວມ, ການດັດແກ້ດັ່ງກ່າວຈະຕ້ອງຜ່ານການເຫັນດີເປັນເອກະພາບຈາກທຸກລັດພາຄີ.

## ມາດຕາ 12: ການໃຫ້ສັດຕະຍາບັນ ຫຼື ການຍອມຮັບ.

ເອກະສານຊ້ອນທ້າຍ ຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນ ຫຼື ຍອມຮັບຈາກລັດຖະບານຂອງລັດ ພາຄີ. ມາດຕານີ້ແມ່ນຍັງໃຊ້ກັບກໍລະນີທີ່ມີການດັດແກ້ເອກະສານຊ້ອນທ້າຍເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

## ມາດຕາ 13: ຜົນບັງຄັບໃຊ້.

ເອກະສານຊ້ອນທ້າຍ ຈະມີຜົນບັງຄັບໃຊ້ນັບແຕ່ວັນທີ ທີ່ລັດພາຄີຢ່າງນ້ອຍ 2 ປະເທດ ໄດ້ໃຫ້ສັດ ຕະຍາບັນ ຫຼື ຍອມຮັບ ແລະ ຈະມີຜົນກັບສະເພາະປະເທດທີ່ໃຫ້ສັດຕະຍາບັນແລ້ວເທົ່ານັ້ນ. ມາດຕານີ້ແມ່ນ ຍັງໃຊ້ກັບກໍລະນີທີ່ມີ ການດັດແກ້ເອກະສານຊ້ອນທ້າຍເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

## ມາດຕາ 14: ການປັບປຸງກົດໝາຍພາຍໃນປະເທດ.

ໃນກໍລະນີທີ່ຈຳເປັນ, ລັດພາຄີ ຕ້ອງໄດ້ດຳເນີນການປັບປຸງກົດໝາຍພາຍໃນປະເທດທີ່ກ່ຽວຂ້ອງໃຫ້ສອດຄ່ອງ ກັບເນື້ອໃນເອກະສານຊ້ອນທ້າຍ.

## ມາດຕາ 15: ຂໍ້ສະຫງວນ.

ບໍ່ອະນຸຍາດໃຫ້ມີການຕັ້ງຂໍ້ສະຫງວນຕໍ່ເອກະສານຊ້ອນທ້າຍນີ້.

## ມາດຕາ 16: ການຢຸດຕິການນຳໃຊ້ເອກະສານຊ້ອນທ້າຍ.

ລັດພາຄີແຕ່ລະປະເທດ ອາດຈະຢຸດຕິການນຳໃຊ້ເອກະສານຊ້ອນທ້າຍຊົ່ວຄາວ ທັງໝົດ ຫຼື ບາງສ່ວນໂດຍ ທັນທີເມື່ອມີກໍລະນີສຸກເສີນທີ່ມີຜົນກະທົບຕໍ່ຄວາມປອດໄພພາຍໃນປະເທດ. ລັດພາຄີ ຈະຕ້ອງ ແຈ້ງຕໍ່ລັດພາຄີອື່ນຮັບ ຮູ້ໂດຍໄວທີ່ສຸດກ່ຽວກັບການຢຸດຕິການນຳໃຊ້ເອກະສານຊ້ອນທ້າຍ ແລະ ຈະສິ້ນສຸດ ລົງທັນທີທີ່ເຫດການກັບສູ່ ສະພາວະປົກກະຕິ.

## ມາດຕາ 17: ການພົວພັນກັບສັນຍາ.

ໃນຖານະທີ່ເປັນມາດຕະການໃນການດຳເນີນການຕາມຫຼັກການທີ່ກຳນົດໄວ້ໃນສັນຍາ, ເອກະສານ ຊ້ອນທ້າຍຈະຕ້ອງບໍ່ມີການບິດເບືອນ ຫຼື ຂັດຕໍ່ຫຼັກການດັ່ງກ່າວ. ໃນກໍລະນີທີ່ມີຂໍ້ຂັດແຍ່ງ ລະຫວ່າງ ເອກະ ສານຊ້ອນທ້າຍ ແລະ ສັນຍາ ແມ່ນໃຫ້ຖືເອົາສັນຍາເປັນຫຼັກ ແລະ ໃນກໍລະນີທີ່ມີຂໍ້ຄັດແຍ່ງ ລະຫວ່າງ ເອກະ ສານຊ້ອນທ້າຍນີ້ກັບເອກະສານຊ້ອນທ້າຍອື່ນ ຫຼື ອະນຸສັນຍາ ໃຫ້ຕີຄວາມໝາຍໂດຍອາໄສສັນຍາເປັນຫຼັກ.

**ມາດຕາ 18: ການພົວພັນຂອງເອກະສານຄັດຕິດກັບເອກະສານຊ້ອນທ້າຍ.**

ເອກະສານຄັດຕິດ ຖືເປັນສ່ວນໜຶ່ງຂອງເອກະສານຊ້ອນທ້າຍ ແລະ ມີຜົນສັດສິດເທົ່າທຽມກັນ.

**ມາດຕາ 19: ການແກ້ໄຂຂໍ້ຂັດແຍ່ງ.**

ທຸກຂໍ້ຂັດແຍ່ງທີ່ເກີດຂຶ້ນກ່ຽວກັບການຕີຄວາມໝາຍ ຫຼື ການນຳໃຊ້ເອກະສານຊ້ອນທ້າຍສະບັບນີ້ ລະຫວ່າງລັດພາຄີ ນັບແຕ່ 2 ປະເທດ ຫຼື ຫຼາຍກວ່ານັ້ນ ຈະຖືກແກ້ໄຂໂດຍກົງ ຫຼື ໂດຍຜ່ານການເຈລະຈາຢ່າງສັນຕິວິທີໃນຄະນະກຳມະການຮ່ວມກັນ.

**ມາດຕາ 20: ການຍົກເລີກ.**

ເມື່ອເອກະສານຊ້ອນທ້າຍມີຜົນບັງຄັບໃຊ້ແລ້ວ, ເອກະສານຊ້ອນທ້າຍບໍ່ສາມາດຖືກຍົກເລີກແຍກ ຕ່າງຫາກຈາກສັນຍາໄດ້.

ເອກະສານຄັດຕິດ: ຮູບແບບຂອງໃບສັ່ງສິນຄ້າ.

ເພື່ອເປັນພະຍານຕໍ່ເອກະສານນີ້, ຜູ້ລົງນາມຂ້າງລຸ່ມນີ້ ແມ່ນໄດ້ຮັບມອບສິດຢ່າງຖືກຕ້ອງໃນການລົງ ນາມໃນເອກະສານຊ້ອນທ້າຍນີ້.

ລົງນາມທີ່ ຖຸນມິງ, ວັນທີ 05 ກໍລະກົດ 2005 ໂດຍເປັນພາສາອັງກິດ ຊຶ່ງມີຕົ້ນສະບັບຈານວນ 06 ສະບັບ.

ລົງນາມ ໂດຍ:

ລັດຖະບານແຫ່ງລາຊະອານາຈັກ ກຳປູເຈຍ

ພະນະທ່ານ Sun Chanthol

ລັດຖະມົນຕີວ່າການກະຊວງໂຍທາທິການ ແລະ ຂົນສົ່ງ
ລັດຖະບານແຫ່ງສາທາລະນະລັດ ປະຊາຊົນ ຈີນ

ພະນະທ່ານ Zhang Chunxian
ລັດຖະມົນຕີວ່າການກະຊວງສື່ສານ

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພະນະທ່ານ ສົມປອງ ມົງຄົນວິໄລ
ລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ

ລັດຖະບານແຫ່ງສະຫະພາບ ມຽນມາ

ພະນະທ່ານ Soe Tha
ລັດຖະມົນຕີວ່າການກະຊວງພັດທະນາເສດຖະກິດ ແລະ ແຜນການແຫ່ງຊາດ

ລັດຖະບານແຫ່ງລາຊະອານາຈັກ ໄທ

ພະນະທ່ານ Suriya Jungrungreankit
ລັດຖະມົນຕີວ່າການກະຊວງຄົມມະນາຄົມ

ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ພະນະທ່ານ Bui Ba Bong
ລັດຖະມົນຕີຊ່ວຍວ່າການກະຊວງກະສິກໍາ ແລະ ພັດທະນາຊົນນະບົດ

# ເອກະສານຄັດຕິດ
# ຮູບແບບຂອງໃບສົ່ງສິນຄ້າ

ສະບັບສຳເນົາເລກທີ/Copy No. [1 (ຜູ້ສົ່ງສິນຄ້າ/consignor) [2 (ຜູ້ຮັບສິນຄ້າ/Consignee) [3 (ຜູ້ຂົນສົ່ງ/Carrier)

| | |
|---|---|
| 1. ຜູ້ສົ່ງສິນຄ້າ (ຊື່, ທີ່ຢູ່ ແລະ ຂໍ້ມູນສຳລັບຕິດຕໍ່: ໂທລະສັບ, ໂທລະສານ, ອີເມວ)/ Consignor (name, address and contact data: phone, fax, email) | ໃບສົ່ງສິນຄ້າທາງບົກລະຫວ່າງປະເທດ/International Consignment Note (ການຂົນສົ່ງນີ້ຢູ່ພາຍໃຕ້ຂໍ້ບັງຄັບຂອງເອກະສານຊ້ອນທ້າຍ 10 ຂອງສັນຍາວ່າດ້ວຍການອຳນວຍຄວາມສະດວກໃນການຂົນສົ່ງຜ່ານ ແດນລະຫວ່າງກຳປູເຈຍ, ຈີນ, ລາວ, ມຽນມາ, ໄທ ແລະ ຫວຽດນາມ. ເຖິງຢ່າງໃດກໍ່ຕາມ, ອາດຈະບໍ່ມີຜົນກະທົບຕໍ່ຂໍ້ກຳນົດໃນສັນຍາທີ່ລະບຸ ໄວ້ຢ່າງອື່ນ/ (This carriage is subject notwithstanding any clause to the contrary to Annex 10 to the Agreement between Cambodia, PRC, Lao PDR, Myanmar, Thailand, and Viet Nam for the Facilitation of CrossBorder Transport of Goods and People) |

<table>
<tr><td colspan="3">2. ຜູ້ຮັບສິນຄ້າ (ຊື່, ທີ່ຢູ່ ແລະ ຂໍ້ມູນສໍາລັບຕິດຕໍ່: ໂທລະ ສັບ, ໂທລະສານ, ອີເມວ)/Consignee (name, address and contact data: phone, fax, email)</td><td colspan="4">16. ຜູ້ຂົນສົ່ງ (ຊື່, ທີ່ຢູ່ ແລະ ຂໍ້ມູນສໍາລັບຕິດຕໍ່: ໂທລະສັບ, ໂທລະສານ, ອີເມວ)/Carrier (name, address and contact data: phone, fax, email)</td></tr>
<tr><td colspan="3">3. ສະຖານທີ່ສົ່ງມອບສິນຄ້າ/Place of delivery of the goods</td><td colspan="4">17. ຜູ້ຂົນສົ່ງຕໍ່ (ຊື່, ທີ່ຢູ່ ແລະ ຂໍ້ມູນສໍາລັບຕິດຕໍ່: ໂທລະສັບ, ໂທລະ ສານ, ອີເມວ)/Subcontracting actual carrier (name, address and contact data: phone, fax, email)</td></tr>
<tr><td colspan="3">4. ສະຖານທີ່ ແລະ ວັນທີທີ່ຮັບມອບສິນຄ້າ/Place and date of taking in charge of the goods</td><td colspan="4" rowspan="2">18. ການໃສ່ເຄື່ອງໝາຍຂອງຜູ້ຂົນສົ່ງ/Carrier's remarks</td></tr>
<tr><td colspan="3">5. ລາຍການເອກະສານທີ່ຄັດຕິດມາ/Documents attached</td></tr>
<tr><td>6. ເຄື່ອງໝາຍ ແລະ ໝາຍ ເລກ/ Marks and numbers</td><td>7. ຈໍານວນຫີບ ຫໍ່/Number of packages</td><td>8. ວິທີການຫີບ ຫໍ່/Method of</td><td>9. ລັກສະນະ (ອັນຕະລາຍ)/ (Dangerous) Nature of the goods</td><td rowspan="2">10. ລາຍການ ອື່ນ /Other particulars:<br>_ ມູນຄ່າພາສີ/ Customs value<br>_ ອື່ນໆ/Other</td><td rowspan="2">11. ນໍ້າ ໜັກລວມຊັ່ງ ສິນຄ້າເປັນກິໂລ ກຼາມ/Gross Weight in Kg</td><td rowspan="2">12. ປະລິມານ ເປັນຈໍານວນ ແມັດ ກ້ອນ/Valume in m3</td></tr>
<tr><td colspan="4">ຊະນິດ/ADR Class ໝາຍເລກ ADR Number ຕົວອັກສອນ ADR Letter</td></tr>
<tr><td colspan="2">13. ຄໍາສັ່ງຂອງຜູ້ສົ່ງ/Consignor's instructions:<br>- ສໍາລັບວິທີການແຈ້ງພາສີ/for Customs formalities:<br>- ສໍາລັບວິທີການອື່ນໆ/for other formalitiesG<br>- ອະນຸຍາດ/ບໍ່ອະນຸຍາດໃຫ້ມີການ ປ່ຽນຖ່າຍຍານພະຫະນະ/ transship- ment is/is not allowed:<br>- ອື່ນໆ/other:</td><td colspan="5">19. ສັນຍາພິເສດ/Special Agreements:<br>- ຜູ້ຂົນສົ່ງເປັນຜູ້ເຮັດປະກັນໄພສິນຄ້າ/cargo insurance to be arranged by the carrier:<br>- ກໍານົດເວລາໃນການຂົນສົ່ງ/period/latest day for performance of carriage:<br>- ລາຄາສິນຄ້າ ແລະ/ຫຼື ຈໍານວນເງິນສ່ວນໄດ້ເສຍພິເສດໃນການສົ່ງມອບ/declared value and/or special interest in delivery of goods:</td></tr>
</table>

<table>
<tr><td rowspan="4">14. ຄຳສັ່ງກ່ຽວກັບການຊຳລະຄ່າຂົນສົ່ງ/Instructions on payment of carriage change:<br>□ຊຳລະແລ້ວ/prepaid<br>□ ຮຽກເກັບ/collect</td><td>20. ຜູ້ມີໜ້າທີ່ຊຳລະ/To be paid by:</td><td colspan="2">ຜູ້ສົ່ງ Consignor</td><td colspan="2">ສະກຸນເງິນ/ Currency</td><td colspan="2">ຜູ້ຮັບສິນຄ້າ/ Consignee</td></tr>
<tr><td>ຄ່າທຳນຽມການຂົນສົ່ງ/ Carriage charges:<br>ສ່ວນຫຼຸດ/Reductions:</td><td></td><td></td><td></td><td></td><td></td><td></td></tr>
<tr><td>ດຸ່ນດຽງ/Balance:<br>ຄ່າທຳນຽມເພີ່ມເຕີມ/ Supple-<br>mental Charges:<br>ຄ່າທຳນຽມອື່ນໆ/Other ChargesG</td><td></td><td></td><td></td><td></td><td></td><td></td></tr>
<tr><td>ລວມ/Total:</td><td></td><td></td><td></td><td></td><td></td><td></td></tr>
<tr><td></td><td colspan="7">15. ຈຳນວນເງິນທີ່ຕ້ອງຊຳລະເມື່ອສົ່ງມອບສິນຄ້າ/Cash on Delivery:</td></tr>
<tr><td>22. ລາຍເຊັນ/ກາປະທັບຂອງຜູ້ສົ່ງ/ Consignor's signature/stamp</td><td colspan="3">23. ລາຍເຊັນ/ກາປະທັບຂອງຜູ້ຂົນສົ່ງ/ Carrier's signature/stamp</td><td colspan="4">24. ໄດ້ຮັບສິນຄ້າ/Goods received:<br>- ທີ່/at (ສະຖານທີ່/place)<br>- ເວລາ/on (ວັນທີ/date)<br>ການລະບຸເນື້ອໃນຂອງຜູ້ຮັບສິນຄ້າ/ Consignee's remarks:<br>ລາຍເຊັນ/ກາປະທັບຂອງຜູ້ຮັບສິນຄ້າ/ Consignee's signature/stamp:</td></tr>
</table>

ຜູ້ສົ່ງ/Consignor

ສະກຸນເງິນ/

Currency ຜູ້ຮັບສິນ ຄ້າ/Consignee